ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 63 /ຄປຈ

ນະຄອນຫລວງວຽງຈັນ, ວັນທີ 18 ພຶດສະພາ 2005

# ມະຕິຕົກລົງ

## ຂອງຄະນະປະຈຳສະພາແຫ່ງຊາດໃນການ ຕີຄວາມໝາຍມາດຕາ 53 ຂໍ້ 11 ຂອງລັດຖະທຳມະນູນແຫ່ງ ສປປລາວ ກ່ຽວກັບການໃຫ້ສັດຕະຍາບັນ

---

ອີງຕາມມາດຕາ 56 ຂໍ້ 2 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ກ່ຽວກັບສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດໃນການຕີຄວາມໝາຍ, ອະທິບາຍລັດຖະທຳມະນູນ ແລະກົດໝາຍ,

ຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍ ມາດຕາ 53 ຂໍ້ 11 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ທີ່ໄດ້ກຳນົດວ່າ " ຕົກລົງໃຫ້ສັດຕະຍາບັນ ຫລືລຶບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດ ຕາມກົດໝາຍ " ດັ່ງນີ້:

ມາດຕາ 1. ການໃຫ້ສັດຕະຍາບັນຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂໍ້ 11 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ແມ່ນການໃຫ້ສັດຕະຍາບັນຕໍ່ສົນທິສັນຍາ ຫລື ສັນຍາສາກົນ ຊຶ່ງ ສປປ ລາວ ໄດ້ເຊັນກັບລັດຕ່າງປະເທດ ຫລືເຂົ້າຮ່ວມເປັນພາຄີ ລວມທັງສັນຍາທີ່ ສປປ ລາວ ໄດ້ເຊັນກັບຕ່າງປະເທດເຊັ່ນ: ອົງການຈັດຕັ້ງສາກົນ ຊຶ່ງສັນຍາດັ່ງກ່າວໄດ້ກຳນົດໄວ້ໃຫ້ມີການໃຫ້ສັດຕະຍາບັນ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ຜູ້ປະຈຳການ

ປານີ ຢາທໍ່ຕູ້